ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0027 /ປທລ/2021

ນະຄອນຫຼວງວຽງຈັນ, ວັນທີ 26 ເມສາ 2021

ແຈ້ງການ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ; ແລະ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ທີ່ນັບຖື.

ເລື່ອງ: ເລື່ອນວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020.

- ອີງຕາມ ຄຳສັ່ງ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19, ສະບັບເລກທີ 15/ນຍ ລົງວັນທີ 21 ເມສາ 2021;
- ອີງຕາມ ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ຂອງ ບໍລິສັດ ສະບັບເລກທີ 0024/ປທລ/2021, ລົງວັນທີ 08 ເມສາ 2021.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ປທລ ຫຼື ບໍລິສັດ) ຂໍສະເໜີມາຍັງທ່ານ ກ່ຽວກັບການຂໍເລື່ອນວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ປທລ ປະຈຳປີ 2020 ອອກໄປກ່ອນຢ່າງບໍ່ມີກຳນົດໃນໄລຍະນີ້ ແຕ່ບໍ່ໃຫ້ກາຍວັນທີ 28 ພຶດສະພາ 2021.

ໂດຍໃນເບື້ອງຕົ້ນໄດ້ກຳນົດເອົາວັນທີ 29 ເມສາ 2021 ເປັນມື້ຈັດກອງປະຊຸມດັ່ງກ່າວ ແລະ ການເລື່ອນວັນທີຈັດກອງປະຊຸມນີ້ ກໍ່ເນື່ອງມາຈາກການລະບາດຂອງພະຍາດ COVID-19 ທີ່ຫຼາຍຝ່າຍຍັງບໍ່ສາມາດຄວບຄຸມໄດ້ເຕັມທີ ຈຶ່ງເຮັດໃຫ້ມີຄວາມຈຳເປັນຕ້ອງໄດ້ເລື່ອນມື້ຈັດກອງປະຊຸມດັ່ງກ່າວອອກໄປ ທັ້ງນີ້ກໍ່ເພື່ອເປັນການຮັບປະກັນທາງດ້ານສຸຂະພາບຂອງບັນດາຜູ້ຖືຮຸ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມມາດຕະການສະກັດກັ້ນການແຜ່ລະບາດພະຍາດຂອງລັດຖະບານ.

ສຳລັບວັນທີ, ເວລາ ແລະ ສະຖານທີ່ ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ບໍລິສັດຈະແຈ້ງໃຫ້ທ່ານຮັບຮູ້ຕື່ມໃນພາຍຫຼັງອີກຄັ້ງໃນເວລາທີ່ເໝາະສົມ.

ດັ່ງນັ້ນ, ບໍລິສັດຈຶ່ງຂໍຮຽນສະເໜີມາຍັງທ່ານເພື່ອພິຈາລະນາຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຮອງປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທະດອນ ເມກສະຫວັນ
Chanthadom MEKSAVANH